ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 234 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 30/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 10/ຄປຈ, ລົງວັນທີ 15 ທັນວາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 30 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 13 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍລັດຖະບານ
# (ສະບັບປັບປຸງ)

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ( ປັບປຸງ ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງລັດຖະບານ ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ; ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ມີປະສິດທິພາບ ແນໃສ່ຮັບປະກັນການປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ໃຫ້ຖືກຕ້ອງ, ເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດ ມັ່ງຄັ່ງ ເຂັ້ມແຂງ, ສັງຄົມມີຄວາມສາມັກຄີ ເປັນປຶກແຜ່ນ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 ລັດຖະບານ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ອົງການບໍລິຫານແຫ່ງລັດ ຊຶ່ງຖືກຮັບຮອງໂດຍກອງປະຊຸມສະພາແຫ່ງຊາດ, ມີຄວາມຮັບຜິດຊອບ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ.

**ມາດຕາ 3 ພາລະບົດບາດຂອງລັດຖະບານ**

ລັດຖະບານ ມີ ພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ເປັນຕົ້ນດ້ານ ການເມືອງ, ການປົກຄອງ, ເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ມີຄຸນປະໂຫຍດສູງສຸດ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດຍືນຍົງ.

**ມາດຕາ 4 (ປັບປຸງ) ຫຼັກການເຄື່ອນໄຫວຂອງລັດຖະບານ**

ການເຄື່ອນໄຫວຂອງລັດຖະບານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

2. ລວມສູນປະຊາທິປະໄຕສົມທົບກັບການຍົກສູງຄວາມຮັບຜິດຊອບຂອງຫົວໜ້າລັດຖະບານ ແລະ ບັນດາສະມາຊິກລັດຖະບານ ໂດຍມີພັກປະຊາຊົນປະຕິວັດລາວ ເປັນຜູ້ນຳພາ;

3. ຖືເອົາແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເປັນກຳລັງແຮງ ແລະ ເອົາການບໍລິການຮັບໃຊ້ປະຊາຊົນເປັນກົກ;

4. ຮັບປະກັນການນຳໃຊ້ວິທີການ ສຶກສາອົບຮົມ, ເສດຖະກິດ ແລະ ບໍລິຫານ ເພື່ອຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;

5. ກະທັດຮັດ, ທັນສະໄໝ, ປະຢັດ, ເປີດເຜີຍ, ໂປ່ງໃສ, ເດັດຂາດ, ຍຸຕິທຳ ແລະ ສາມາດກວດກາໄດ້;

6. ບໍລິຫານລັດ ຢ່າງມີວິທະຍາສາດ ແລະ ແທດເໝາະກັບຕົວຈິງ.

## ໝວດທີ 2
## ສິດ ແລະ ໜ້າທີ່ ຂອງລັດຖະບານ

**ມາດຕາ 5 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະບານ**

ລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດ ຂອງປະທານປະເທດ;

2. ສະເໜີ ຮ່າງກົດໝາຍ ຕໍ່ສະພາແຫ່ງຊາດ, ຮ່າງລັດຖະບັນຍັດ ຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງລັດຖະດຳລັດ ຕໍ່ປະທານປະເທດ;

3. ອອກ ດຳລັດ, ມະຕິ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ;

4. ກຳນົດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາແຫ່ງຊາດ ແລ້ວສະເໜີຕໍ່ສະພາແຫ່ງຊາດ;

5. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບ ການກຳນົດ, ການປັບປຸງ, ການລົບລ້າງ ຫຼື ການຍົກເວັ້ນອັດຕາພາສີ, ສ່ວຍສາອາກອນ ຕໍ່ສະພາແຫ່ງຊາດ, ຄ່າທຳນຽມ ແລະ ຄ່າບໍລິການ ຕໍ່ຄະນະປະຈຳສະພາແຫ່ງຊາດ;

6. ຄົ້ນຄວ້າ ແລະ ສະເໜີ ສະພາແຫ່ງຊາດ ກ່ຽວກັບການ ສ້າງຕັ້ງ, ໂຮມເຂົ້າ, ແຍກອອກ ຫຼື ຍຸບເລີກກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ການກຳນົດເຂດແດນຂອງ ແຂວງ, ນະຄອນຫຼວງ;

7. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ກົມ ຫຼື ອົງການລັດທຽບເທົ່າກົມ;

8. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ, ນະຄອນ ແລະ ກຳນົດເຂດແດນ ຂອງເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງ;

9. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ;

10. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ທົ່ວສັງຄົມ ໃຫ້ມີສະຕິເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

11. ຊີ້ນຳ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

12. ຕົກລົງ ໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ໃຫ້ສັນຊາດລາວຄືນ;

13. ຕົກລົງ ການເອົາເດັກ ໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;

14. ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;

15. ຄົ້ນຄວ້າ ແລະ ສະເໜີ ຕໍ່ປະທານປະເທດ ເພື່ອພິຈາລະນາ ການໃຫ້ອະໄພຍະໂທດ;

16. ຄຸ້ມຄອງພົນລະເມືອງ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ; ກຳນົດ ແລະ ນຳໃຊ້ບັນດາມາດຕະການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ລວມທັງພົນລະເມືອງລາວ ຢູ່ຕ່າງປະເທດ;

17. ສ້າງ, ເຂົ້າຮ່ວມ, ຕີຄວາມໝາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ໃນລະດັບລັດຖະບານ;

18. ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;

19. ຊີ້ນຳ ແລະ ຕິດຕາມ ກວດກາ ການບໍລິການຮັບໃຊ້ປະຊາຊົນ ແລະ ການແກ້ໄຂຄຳສະເໜີຂອງປະຊາຊົນ;

20. ລາຍງານ ການເຄື່ອນໄຫວຂອງຕົນ ຕໍ່ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 (ປັບປຸງ) ສິດ ແລະ ໜ້າທີ່ ຂອງນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ ເປັນຫົວໜ້າລັດຖະບານ, ຮັບຜິດຊອບໂດຍກົງ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ, ຊີ້ນຳ ແລະ ຄຸ້ມຄອງ ການເຄື່ອນໄຫວວຽກງານ ຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

ນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມລັດຖະບານ;

2. ຊີ້ນຳ ແລະ ອຳນວຍຄວບຄຸມວຽກງານຂອງລັດຖະບານ, ການເຄື່ອນໄຫວວຽກງານຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນ ທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ;

3. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງກອງປະຊຸມສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ຂອງກອງປະຊຸມລັດຖະບານ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາແຫ່ງຊາດ ແລະ ນິຕິກຳ ຂອງລັດຖະບານ;

4. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ;

5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ;

6. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງ; ມີຄຳເຫັນຕໍ່ການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກ່ອນນຳສະເໜີ ກອງປະຊຸມສະພາປະຊາຊົນ ຫຼື ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ພິຈາລະນາຮັບຮອງ;

7. ເລື່ອນຊັ້ນ ຫຼື ປົດຊັ້ນ ພັນເອກ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

8. ສະເໜີ ປະທານປະເທດ ເລື່ອນຊັ້ນ ຫຼື ປົດຊັ້ນ ນາຍພົນ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

9. ສະເໜີ ປະທານປະເທດ ແຕ່ງຕັ້ງ ເອກອັກຄະລັດຖະທູດ ຫຼື ຜູ້ຕາງໜ້າທີ່ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຫຼື ຮຽກກັບຄືນປະເທດ;

10. ອອກຂໍ້ຕົກລົງ ໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ໃຫ້ສັນຊາດລາວຄືນ ແລະ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;

11. ອອກຂໍ້ຕົກລົງ ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;

12. ສະເໜີ ປະທານປະເທດ ເພື່ອພິຈາລະນາການໃຫ້ອະໄພຍະໂທດ;

13. ສະເໜີ ສະພາແຫ່ງຊາດ ພິຈາລະນາ, ຮັບຮອງ ການຍົກເລີກ, ລົບລ້າງ ການເຂົ້າຮ່ວມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ໃນລະດັບລັດ;

14. ສະເໜີ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຕົກລົງ ໃຫ້ສັດຕະຍາບັນແກ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ໃນລະດັບລັດ;

15. ສະເໜີ ປະທານປະເທດ ຕົກລົງມອບ ຫຼື ປະດັບຫຼຽນຄຳແຫ່ງຊາດ, ຫຼຽນກາຽດຕິຄຸນ, ຫຼຽນໄຊ, ນາມມະຍົດສູງສຸດແຫ່ງລັດ ຫຼື ຕົກລົງໃຫ້ການຍ້ອງຍໍດ້ວຍຮູບການອື່ນ;

16. ອອກ ດຳລັດ, ຂໍ້ຕົກລົງ ແລະ ຄຳສັ່ງ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ ຂອງລັດຖະບານ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນ ທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ;

17. ງົດປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການອື່ນ ທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ນິຕິກຳອື່ນ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

18. ມອບສິດ ໃຫ້ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕາງໜ້າລັດຖະບານເຂົ້າຮ່ວມກອງປະຊຸມ, ລົງນາມໃນສັນຍາ ແລະ ສົນທິສັນຍາ ກັບຕ່າງປະເທດ;

19. ສະຫຼຸບ ແລະ ລາຍງານປະຈຳປີ ກ່ຽວກັບການປະຕິບັດໜ້າທີ່ ຂອງລັດຖະບານ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ;

20. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າ ຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງຮອງນາຍົກລັດຖະມົນຕີ**

ຮອງນາຍົກລັດຖະມົນຕີ ຊ່ວຍນາຍົກລັດຖະມົນຕີ ໃນການຊີ້ນຳວຽກງານຂອງ ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມຂົງເຂດວຽກງານ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ.

ຮອງນາຍົກລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລານາຍົກລັດຖະມົນຕີ ຕິດຂັດ.

ຮອງນາຍົກລັດຖະມົນຕີ ມີສິດ ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ຂອງລັດຖະບານ

**ມາດຕາ 8 (ປັບປຸງ) ໂຄງປະກອບກົງຈັກ ຂອງລັດຖະບານ**

ກົງຈັກ ຂອງລັດຖະບານ ປະກອບດ້ວຍ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຊຶ່ງຖືກຮັບຮອງໂດຍສະພາແຫ່ງຊາດ ຕາມການສະເໜີ ຂອງນາຍົກລັດຖະມົນຕີ.

ການກຳນົດໂຄງປະກອບກົງຈັກຂອງລັດຖະບານ ໃຫ້ອີງໃສ່ ລັດຖະທຳມະນູນ, ກົດໝາຍ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງປະເທດໃນແຕ່ລະໄລຍະ.

ມາດຕາ 9 ໂຄງປະກອບບຸກຄະລາກອນ ຂອງລັດຖະບານ

ບຸກຄະລາກອນ ຂອງລັດຖະບານ ປະກອບດ້ວຍ ສະມາຊິກລັດຖະບານ ຊຶ່ງມີ ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

ນາຍົກລັດຖະມົນຕີ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີ ຂອງປະທານປະເທດ.

ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີ ຂອງນາຍົກລັດຖະມົນຕີ ພາຍຫຼັງສະພາແຫ່ງຊາດ ໄດ້ຮັບຮອງ.

ມາດຕາ 10 ອາຍຸການ ຂອງລັດຖະບານ

ລັດຖະບານ ມີ ອາຍຸການເທົ່າກັບອາຍຸການ ຂອງສະພາແຫ່ງຊາດ. ໃນກໍລະນີ ທີ່ສະພາແຫ່ງຊາດ ໝົດອາຍຸການແລ້ວ ແຕ່ຍັງບໍ່ທັນໄດ້ຮັບຮອງລັດຖະບານ ຊຸດໃໝ່ນັ້ນ ໃຫ້ລັດຖະບານ ຊຸດເກົ່າ ສືບຕໍ່ປະຕິບັດໜ້າທີ່ ຂອງຕົນຈົນກວ່າຈະມີລັດຖະບານ ຊຸດໃໝ່.

ສະມາຊິກລັດຖະບານ ດຳລົງຕຳແໜ່ງຢູ່ບ່ອນເກົ່າ ບໍ່ໃຫ້ເກີນ ສອງສະໄໝຕິດຕໍ່ກັນ.

## ໝວດທີ 4
## ສຳນັກງານນາຍົກລັດຖະມົນຕີ
## ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ມາດຕາ 11 (ປັບປຸງ) ສຳນັກງານນາຍົກລັດຖະມົນຕີ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ ແມ່ນ ບ່ອນປະຈຳການຂອງນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແມ່ນ ກົງຈັກໜຶ່ງຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ໃນການອຳນວຍ, ຄວບຄຸມການເຄື່ອນໄຫວວຽກງານ ຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ; ປະສານສົມທົບວຽກງານກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ; ຄຸ້ມຄອງ, ບໍລິຫານຮັບໃຊ້, ຮັບປະກັນຄວາມປອດໄພ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານ ຂອງລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ.

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ຕິດຕາມການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານຂອງ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

2. ກະກຽມ ເນື້ອໃນ, ບັນທຶກ, ອອກແຈ້ງການ ແລະ ຮ່າງມະຕິຂອງກອງປະຊຸມລັດຖະບານ, ກອງປະຊຸມນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ກອງປະຊຸມອື່ນ ທີ່ ນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ເປັນປະທານ;

3. ເກັບກຳ, ສັງລວມ ແລະ ສະເໜີທັດສະນະ ກ່ຽວກັບ ຂໍ້ມູນ ຂ່າວສານ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລາຍງານຂໍການຊີ້ນຳ ຫຼື ການຕົກລົງຈາກ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

4. ຄົ້ນຄວ້າ, ວິເຄາະ, ວິໄຈ, ກວດກາ ກັ່ນຕອງ, ສັງລວມ ແລະ ສະເໜີຄວາມເຫັນ ກ່ຽວກັບບັນຫາສຳຄັນ ທີ່ຂະແໜງການ ແລະ ທ້ອງຖິ່ນ ສະເໜີຂຶ້ນມາ ແລ້ວລາຍງານຂໍຄຳເຫັນຊີ້ນຳ ຫຼື ຕົກລົງຈາກ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

5. ຄົ້ນຄວ້າ ສະເໜີຄຳເຫັນຕໍ່ ລັດຖະບານ ກ່ຽວກັບການກຳນົດ ນະໂຍບາຍ, ແຜນຍຸດທະສາດການພັດທະນາ ແລະ ກົນໄກການຄຸ້ມຄອງເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ມີຄຸນປະໂຫຍດສູງສຸດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດຍືນຍົງ;

6. ເຂົ້າຮ່ວມກອງປະຊຸມລັດຖະບານ, ກອງປະຊຸມ ນາຍົກ-ຮອງນາຍົກ ລັດຖະມົນຕີ ແລະ ກອງປະຊຸມອື່ນ ທີ່ນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ເປັນປະທານ;

7. ຈັດຕັ້ງກອງປະຊຸມ ຫຼື ເຂົ້າຮ່ວມກອງປະຊຸມກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ການຈັດຕັ້ງອື່ນ;

8. ສັງລວມ ຮ່າງ ກົດໝາຍ, ລັດຖະບັນຍັດ, ດຳລັດ ແລະ ຫົວຂໍ້ເອກະສານຕ່າງໆ ເພື່ອເອົາເຂົ້າໃນວາລະກອງປະຊຸມລັດຖະບານ, ກອງປະຊຸມນາຍົກ-ຮອງນາຍົກ ລັດຖະມົນຕີ ເພື່ອສະເໜີ ນາຍົກລັດຖະມົນຕີ ພິຈາລະນາ;

9. ເຂົ້າຮ່ວມ ຄົ້ນຄວ້າ, ຕິດຕາມ, ຊຸກຍູ້ ການສ້າງ ແລະ ປັບປຸງນິຕິກຳ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ;

10. ເປັນຄະນະປ້ອງກັນຮ່າງກົດໝາຍ ທີ່ລັດຖະບານ ໄດ້ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອນຳເຂົ້າພິຈາລະນາ ໃນກອງປະຊຸມສະພາແຫ່ງຊາດ;

11. ລາຍງານ ສະພາບການ ແລະ ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ລັດຖະບານ ໂດຍມີການປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

12. ຈັດຕັ້ງ, ກະກຽມ ແລະ ເຂົ້າຮ່ວມກອງປະຊຸມພົບປະ, ພິທີຕ້ອນຮັບ ຫຼື ພິທີສົ່ງຄະນະຜູ້ແທນ, ບຸກຄົນສຳຄັນ ທີ່ເປັນແຂກ ຂອງລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

13. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິ, ດຳລັດ ຂອງລັດຖະບານ; ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ຄຳເຫັນຊີ້ນຳ ຂອງນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ພ້ອມທັງສັງລວມລາຍງານ ຕໍ່ລັດຖະບານ ໃນແຕ່ລະໄລຍະ;

14. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາ ຄໍາຮ້ອງ ກ່ຽວກັບການ ຂໍເອົາສັນຊາດ, ຖອນສັນຊາດ, ປະສັນຊາດ, ໃຫ້ສັນຊາດລາວຄືນ ແລະ ເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;

15. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;

16. ໃຫ້ການບໍລິການຮັບໃຊ້ປະຊາຊົນ, ຮັບຟັງ ຄໍາຄິດ ຄໍາເຫັນ, ຄໍາຮ້ອງ, ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບບັນຫາທີ່ຢູ່ໃນຄວາມຮັບຜິດຊອບຂອງ ຕົນ, ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ເພື່ອຄົ້ນຄວ້າ, ແກ້ໄຂ ຫຼື ສະເໜີໃຫ້ຂັ້ນເທິງ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ;

17. ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃນການເຄື່ອນໄຫວວຽກງານໃຫ້ແກ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

18. ຄຸ້ມຄອງພະນັກງານ-ລັດຖະກອນ ທີ່ສັງກັດ ຢູ່ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເຊັ່ນ ແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕາມກົດໝາຍ ແລະ ລະບຽບການ;

19. ຄຸ້ມຄອງ, ນໍາໃຊ້ງົບປະມານ, ປະກອບພາຫະນະ ແລະ ອຸປະກອນຮັບໃຊ້ ຕາມກົດໝາຍ ແລະ ລະບຽບການ;

20. ພົວພັນ, ປະສານສົມທົບກັບ ຫ້ອງວ່າການສູນກາງພັກ, ຫ້ອງວ່າການສໍານັກງານປະທານປະເທດ, ຄະນະເລຂາທິການສະພາແຫ່ງຊາດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອເປັນເອກະພາບ ໃນການບໍລິຫານ, ຄຸ້ມຄອງວຽກງານລວມ ຂອງລັດຖະບານ;

21. ພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ ຂອງລັດຖະບານ;

22. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

23. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ**

ລັດຖະມົນຕີ, ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນໍາ, ຄຸ້ມຄອງ ການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

2. ຊີ້ນໍາ, ກວດກາ ແລະ ວາງມາດຕະການອັນຈໍາເປັນ ກ່ຽວກັບການສ້າງ ແລະ ການຈັດຕັ້ງປະຕິບັດແຜນການວຽກງານ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ;

3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດໍາລັດ ແລະ ດໍາລັດ ຕໍ່ລັດຖະບານ;

4. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ໜັງສືທາງລັດຖະການ;

5. ໂຈະ, ຍົກເລີກ ຫຼື ລົບລ້າງ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ໜັງສືທາງລັດຖະການ ຂອງອົງການຈັດຕັ້ງຂັ້ນລຸ່ມຂອງຕົນ ແລະ ສະເໜີ ປັບປຸງ ຫຼື ຍົກເລີກ ນິຕິກໍາ ຂອງຂະແໜງການອື່ນ ຫຼື ຂອງແຂວງ, ນະຄອນຫຼວງ ທີ່ຂັດກັບ ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າອົງການລັດທຽບເທົ່າພະແນກ; ບັນຈຸ, ສັບຊ້ອນ ພະນັກງານວິຊາການ ພາຍໃນຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;

7. ຕິດຕາມ ກວດກາ, ສະຫຼຸບ, ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງວຽກງານ ຕໍ່ ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

8. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ.

**ມາດຕາ 14 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມການແບ່ງງານ ແລະ ການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕິດຂັດ ຕາມການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

**ມາດຕາ 15 ໂຄງປະກອບກົງຈັກ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະກອບດ້ວຍ ບັນດາກົມ, ອົງການລັດທຽບເທົ່າກົມ, ບັນດາພະແນກ ແລະ ຫົວໜ່ວຍວິຊາການ ຊຶ່ງກຳນົດໂດຍດຳລັດ ຂອງນາຍົກລັດຖະມົນຕີ.

ການກຳນົດໂຄງປະກອບກົງຈັກ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃຫ້ອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງລັດຖະບານ ໃນແຕ່ລະໄລຍະ ຕາມການຕົກລົງຂອງນາຍົກລັດຖະມົນຕີ.

**ມາດຕາ 16 ໂຄງປະກອບບຸກຄະລາກອນ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ບຸກຄະລາກອນ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະກອບດ້ວຍ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ແລະ ຮອງຫົວໜ້າ ກົມ, ຫົວໜ້າ ແລະ ຮອງຫົວໜ້າ ອົງການລັດທຽບເທົ່າກົມ, ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຫົວໜ່ວຍວິຊາການ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ.

## ໝວດທີ 5
## ກະຊວງ ແລະ ອົງການລັດທຽບເທົ່າກະຊວງ

**ມາດຕາ 17 ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແມ່ນ ກົງຈັກຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກ ກ່ຽວກັບຂະແໜງການຂອງຕົນ ໃນຂອບເຂດທົ່ວປະເທດ.

**ມາດຕາ 18 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຮັບຜິດຊອບ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ໃນການບໍລິຫານຄຸ້ມຄອງລັດ ກ່ຽວກັບຂະແໜງການຂອງຕົນ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຮ່າງນະໂຍບາຍ ແລະ ແຜນຍຸດທະສາດ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;
2. ຜັນຂະຫຍາຍ ແນວທາງ, ແຜນນະໂຍບາຍ, ແຜນການ, ມະຕິ ຂອງລັດຖະບານ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;
3. ກຳນົດແຜນການ ສ້າງ, ຝຶກອົບຮົມ, ບຳລຸງ ຍົກລະດັບພະນັກງານ-ລັດຖະກອນ ໃນຂອບເຂດທົ່ວປະເທດ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ຂອງການພັດທະນາປະເທດຊາດ ໃນແຕ່ລະໄລຍະ;
4. ກຳນົດ ການຈັດຕັ້ງ, ມາດຕະຖານ, ເງື່ອນໄຂ ການບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ໃນຂະແໜງການຂອງຕົນ ລວມທັງການ ຍ້ອງຍໍ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕາມກົດໝາຍ ແລະ ລະບຽບການ;
5. ຕິດຕາມ, ກວດກາ ການຈັດຕັ້ງ, ການບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ໃນຂະແໜງການຂອງຕົນ;
6. ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຜີຍແຜ່ ແລະ ແນະນຳ ການນຳໃຊ້ວິທະຍາສາດ, ເຕັກໂນໂລຊີໃໝ່ ເຂົ້າໃນການພັດທະນາຂະແໜງການຂອງຕົນ;
7. ສະເໜີ ປັບປຸງ ຫຼື ສ້າງ ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ຕໍ່ລັດຖະບານ;
8. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໜັງສືທາງລັດຖະການ;
9. ຊີ້ນຳ ແລະ ຄຸ້ມຄອງ ຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງຢ່າງລະອຽດ;
10. ພົວພັນ, ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງລັດຖະບານ;
11. ສະຫຼຸບ ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການຕົກລົງຂອງລັດຖະບານ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ**

ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ແມ່ນ ສະມາຊິກລັດຖະບານ ເປັນຫົວໜ້າກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຮັບຜິດຊອບ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການທີ່ຕົນຮັບຜິດຊອບ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ປະຈຳປີ ຂອງລັດຖະບານ ແລະ ມະຕິຂອງກອງປະຊຸມລັດຖະບານ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ວາງມາດຕະການອັນຈຳເປັນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ມະຕິ ຂອງກອງປະຊຸມສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ຂອງລັດຖະບານ, ແຜນການ ແລະ ການເຄື່ອນໄຫວວຽກງານ ຂອງຕົນ;

3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ ແລະ ດຳລັດ ຕໍ່ລັດຖະບານ;

4. ຊີ້ນຳ ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການເຜີຍແຜ່ ແລະ ແນະນຳ ກ່ຽວກັບການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ເຂົ້າໃນການພັດທະນາຂະແໜງການຂອງຕົນ;

5. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງວຽກງານ;

6. ໂຈະ, ຍົກເລີກ ຫຼື ລົບລ້າງ ນິຕິກຳ ຂອງອົງການຈັດຕັ້ງຂັ້ນລຸ່ມ ຂອງຕົນ ທີ່ຂັດກັບກົດໝາຍ ຫຼື ລະບຽບການ;

7. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຫຼື ສະເໜີຂັ້ນເທິງ ພິຈາລະນາ ໂຈະ, ຍົກເລີກ ຫຼື ລົບລ້າງນິຕິກຳ ຂອງຂະແໜງການອື່ນ ທີ່ຂັດກັບກົດໝາຍ ຫຼື ລະບຽບການ;

8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ, ຮອງຫົວໜ້າ ພະແນກ, ຫົວໜ້າ, ຮອງຫົວໜ້າ ຂະແໜງ, ຫົວໜ້າ, ຮອງຫົວໜ້າໜ່ວຍງານວິຊາການ; ບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງ;

9. ມີຄຳເຫັນຕໍ່ການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂັ້ນແຂວງ;

10. ໃຫ້ການບໍລິການຮັບໃຊ້ປະຊາຊົນ, ຮັບຟັງ ຄຳຄິດ ຄຳເຫັນ, ຄຳຮ້ອງ, ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບບັນຫາທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອຄົ້ນຄວ້າ, ແກ້ໄຂ ຫຼື ສະເໜີໃຫ້ຂັ້ນເທິງ ຫຼື ພາກສ່ວນອື່ນ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ;

11. ພົວພັນ, ຮ່ວມມື, ເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຊ່ວຍຈຳ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ ຂອງລັດຖະບານ;

12. ສະຫຼຸບ ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ;

13. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການຕົກລົງຂອງລັດຖະບານ.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ**

ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ມີ ສິດ ແລະ ໜ້າທີ່ ຊ່ວຍລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ໃນການຊີ້ນຳວຽກງານຂອງຂະແໜງການຕົນ, ຮັບຜິດຊອບວຽກງານຕາມການແບ່ງງານ ແລະ ການມອບໝາຍ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ ຫຼື ຫົວໜ້າອົງການລັດທຽບເທົ່າກະຊວງ ຕິດຂັດ ຕາມການມອບໝາຍ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

**ມາດຕາ 21 (ປັບປຸງ) ໂຄງປະກອບກົງຈັກ ຂອງ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ປະກອບດ້ວຍ ຫ້ອງການກະຊວງ, ຫ້ອງການອົງການລັດທຽບເທົ່າກະຊວງ, ບັນດາກົມ, ອົງການລັດທຽບເທົ່າກົມ, ສະຖາບັນ, ບັນດາພະແນກ, ຂະແໜງ ແລະ ຫົວໜ່ວຍວິຊາການ ຊຶ່ງກຳນົດໂດຍດຳລັດ ຂອງນາຍົກລັດຖະມົນຕີ.

**ມາດຕາ 22 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ບຸກຄະລາກອນ ຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ ປະກອບດ້ວຍ ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າ, ຮອງຫົວໜ້າຫ້ອງການ, ຫົວໜ້າ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ, ຮອງຫົວໜ້າສະຖາບັນ, ຫົວໜ້າ, ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ, ຫົວໜ້າໜ່ວຍວິຊາການ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຊຶ່ງກຳນົດໂດຍດຳລັດ ຂອງນາຍົກລັດຖະມົນຕີ.

## ໝວດທີ 6
## ກອງປະຊຸມລັດຖະບານ

**ມາດຕາ 23 (ປັບປຸງ) ກອງປະຊຸມລັດຖະບານ**

ກອງປະຊຸມລັດຖະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍົກລັດຖະມົນຕີ ເປັນຜູ້ຮຽກໂຮມ ແລະ ເປັນປະທານ, ຍົກເວັ້ນກໍລະນີ ປະທານປະເທດເຂົ້າຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

ກອງປະຊຸມລັດຖະບານ ເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກລັດຖະບານ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກລັດຖະບານ ທັງໝົດ.

ສະມາຊິກລັດຖະບານ ມີໜ້າທີ່ເຂົ້າຮ່ວມກອງປະຊຸມລັດຖະບານທຸກຄັ້ງ. ນອກຈາກນັ້ນ, ອາດເຊີນຜູ້ຕາງໜ້າຈາກອົງການອື່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້. ສຳລັບ ຜູ້ບໍ່ແມ່ນສະມາຊິກລັດຖະບານ ມີສິດປະກອບຄວາມເຫັນ ຕໍ່ກອງປະຊຸມ ແຕ່ບໍ່ມີສິດລົງຄະແນນສຽງ.

ກອງປະຊຸມລັດຖະບານ ພິຈາລະນາ, ຕົກລົງບັນຫາ ຫຼື ລົງມະຕິ ໂດຍຖືເອົາສຽງສ່ວນຫຼາຍ. ຖ້າຫາກ ມີສຽງເທົ່າກັນ ໃຫ້ຖືເອົາສຽງຂອງປະທານກອງປະຊຸມ ເປັນອັນຕັດສິນ.

ໃນກໍລະນີ ມີຄວາມຈຳເປັນ ແລະ ຮີບດ່ວນ ລັດຖະບານ ອາດເປີດກອງປະຊຸມວິສາມັນກໍໄດ້ ຕາມການຕົກລົງຂອງນາຍົກລັດຖະມົນຕີ ຫຼື ຕາມການສະເໜີ ຂອງສະມາຊິກລັດຖະບານ ຢ່າງໜ້ອຍ ໜຶ່ງສ່ວນສາມຂອງຈຳນວນສະມາຊິກລັດຖະບານທັງໝົດ ຫຼື ອາດເປີດກອງປະຊຸມ ນາຍົກ-ຮອງນາຍົກ ລັດຖະມົນຕີ ຮ່ວມກັບສະມາຊິກລັດຖະບານຈຳນວນໜຶ່ງທີ່ກ່ຽວຂ້ອງກໍໄດ້ ຕາມການຕົກລົງ ຂອງນາຍົກລັດຖະມົນຕີ.

ລັດຖະບານ ຍັງຮຽກໂຮມ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເຂົ້າຮ່ວມປະຊຸມ ປີລະສອງເທື່ອ ເພື່ອຕິດຕາມ, ກວດກາ ແລະ ຊີ້ນຳ ການປະຕິບັດໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ ຫຼື ອາດເຊີນ ຫົວໜ້າ ຫຼື ປະທານຂອງອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມເພື່ອປະກອບຄຳເຫັນ.

### ມາດຕາ 24 ກອງປະຊຸມພິເສດ

ກອງປະຊຸມພິເສດ ຂອງລັດຖະບານ ແມ່ນ ກອງປະຊຸມລັດຖະບານ ໂດຍການຮຽກໂຮມ ແລະ ເປັນປະທານຂອງປະທານປະເທດ ຊຶ່ງສາມາດເປີດຂຶ້ນໄດ້ ທຸກເວລາ ຫຼື ເມື່ອປະເທດຊາດຕົກຢູ່ໃນສະພາວະວິກິດການຮ້າຍແຮງທາງດ້ານເສດຖະກິດ-ສັງຄົມ, ໄພທຳມະຊາດ ຫຼື ໃນສະພາວະສຸກເສີນ ທາງດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

### ມາດຕາ 25 (ປັບປຸງ) ເນື້ອໃນທີ່ນຳເຂົ້າກອງປະຊຸມ

ເນື້ອໃນທີ່ນຳເຂົ້າ ພິຈາລະນາ ແລະ ຕົກລົງ ໃນກອງປະຊຸມລັດຖະບານ ມີ ດັ່ງນີ້:

1. ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາແຫ່ງຊາດ;
3. ຮ່າງກົດໝາຍ, ຮ່າງລັດຖະບັນຍັດ ແລະ ຮ່າງດຳລັດ;
4. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ເຂດພິເສດ, ການກຳນົດເຂດແດນຂອງ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ກ່ອນນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;
5. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ບັນດາອົງການຈັດຕັ້ງ ທີ່ຂຶ້ນກັບລັດຖະບານໂດຍກົງ;
6. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ, ກຳນົດເຂດແດນຂອງ ເມືອງ, ເທດສະບານ, ນະຄອນ;
7. ການ ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ, ໂຄງການລົງທຶນຂະໜາດໃຫຍ່ ທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ;
8. ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
9. ເນື້ອໃນ ການເຈລະຈາ, ສົນທິສັນຍາ ແລະ ສັນຍາ ທີ່ຈະເຊັນກັບ ຕ່າງປະເທດ;
10. ການພິຈາລະນາ ຕົກລົງ ກ່ຽວກັບ ການໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ການໃຫ້ສັນຊາດລາວຄືນ ແລະ ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;
11. ການພິຈາລະນາ ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;
12. ການພິຈາລະນາ ການໃຫ້ອະໄພຍະໂທດ ເພື່ອສະເໜີ ປະທານປະເທດ;

13. ບັນຫາ ທີ່ຈຳເປັນ ແລະ ຮີບດ່ວນ ຂອງຂະແໜງການ ຫຼື ທ້ອງຖິ່ນ ສະເໜີ ຕໍ່ ນາຍົກລັດຖະມົນຕີ ທີ່ພົວພັນເຖິງຜົນປະໂຫຍດອັນໃຫຍ່ຫຼວງ ຂອງຊາດ ຫຼື ຂອງປະຊາຊົນ;

14. ການຕ່າງປະເທດ, ການພົວພັນ ແລະ ຮ່ວມມື, ການເຊື່ອມໂຍງກັບ ສາກົນ ແລະ ພາກພື້ນ ທີ່ເປັນບັນຫາໃໝ່ສຳຄັນ ຊຶ່ງຮຽກຮ້ອງໃຫ້ມີການຕົກລົງເປັນເອກະພາບ ດ້ານທັດສະນະ ຫຼື ການອອກສຽງຕ່າງໆ;

15. ບົດສະຫຼຸບ ການເຄື່ອນໄຫວວຽກງານ ຂອງລັດຖະບານ;

16. ບົດລາຍງານ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ;

17. ເນື້ອໃນອື່ນ ທີ່ສຳຄັນ ແລະ ຈຳເປັນ.

## ໝວດທີ 7
## ລະບອບວິທີເຮັດວຽກຂອງລັດຖະບານ

### ມາດຕາ 26 (ປັບປຸງ) ວິທີເຮັດວຽກຂອງລັດຖະບານ

ລັດຖະບານ ເຄື່ອນໄຫວວຽກງານ ຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ.

ລັດຖະບານ ຖືເອົາກອງປະຊຸມ ເປັນວິທີການຕົ້ນຕໍ ໃນການເຄື່ອນໄຫວວຽກງານຂອງຕົນ ແລະ ໃຫ້ຄວາມສຳຄັນໃນການລົງທ້ອງຖິ່ນຮາກຖານ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ.

### ມາດຕາ 27 (ປັບປຸງ) ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະບານ

ສະມາຊິກລັດຖະບານ ເຄື່ອນໄຫວວຽກງານ ດ້ວຍຄວາມຮັບຜິດຊອບສູງ ໂດຍເຄົາລົບ ພາລະບົດບາດ, ໜ້າທີ່ ຂອງກັນ ແລະ ປະສານສົມທົບກັນຢ່າງກົມກຽວ ແລະ ເປັນເອກະພາບກັນ.

ໃນກໍລະນີ ມີບັນຫາບໍ່ເປັນເອກະພາບ ລະຫວ່າງ ສະມາຊິກລັດຖະບານດ້ວຍກັນນັ້ນ ໃຫ້ນຳສະເໜີບັນຫາດັ່ງກ່າວ ຕໍ່ ນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ເພື່ອພິຈາລະນາ ແລະ ແກ້ໄຂ.

ໃນການເຄື່ອນໄຫວວຽກງານຕ່າງປະເທດນັ້ນ ສະມາຊິກລັດຖະບານ ຕ້ອງຂໍຄວາມເຫັນຈາກນາຍົກລັດຖະມົນຕີ.

### ມາດຕາ 28 ການພົວພັນກັບສະພາແຫ່ງຊາດ

ລັດຖະບານ ຕ້ອງອະທິບາຍ, ຕອບຂໍ້ຂ້ອງໃຈ ແລະ ການຊັກຖາມ ຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ ຂອງລັດຖະບານ ຫຼື ຂອງສະມາຊິກລັດຖະບານ, ສະໜອງຂໍ້ມູນຕ່າງໆ ຕາມຄຳສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ. ໃນການພົວພັນວຽກງານກັບຕ່າງປະເທດ ຫຼື ວຽກງານ ຢູ່ພາຍໃນປະເທດ ທີ່ສຳຄັນນັ້ນ ຕ້ອງຂໍຄວາມເຫັນດີຈາກສະພາແຫ່ງຊາດເສຍກ່ອນ. ຖ້າຫາກໄດ້ມີການເຊັນສົນທິສັນຍາ ທີ່ຕ້ອງໃຫ້ສັດຕະຍາບັນ ຕ້ອງນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງ.

ນອກຈາກນັ້ນ, ລັດຖະບານ ຍັງຕ້ອງພົວພັນກັບ ສະພາແຫ່ງຊາດ ໃນການສ້າງ ແລະ ປັບປຸງກົດໝາຍ ຕາມເນື້ອໃນ, ວິທີການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ.

**ມາດຕາ 29 ການພົວພັນກັບປະທານປະເທດ**

ລັດຖະບານ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ປະທານປະເທດ ໃນແຕ່ລະໄລຍະ.

ປະທານປະເທດ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມພິເສດ ຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 30 (ປັບປຸງ) ການພົວພັນກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ**

ລັດຖະບານ ປະສານສົມທົບກັບ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການຕິດຕາມ ກວດກາ, ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ມີຄວາມຫຍຸ້ງຍາກ ລວມທັງ ການບັງຄັບໃຊ້, ຕິດຕາມ ກວດກາ ການປະຕິບັດກົດໝາຍ, ການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ.

**ມາດຕາ 31 (ໃໝ່) ການພົວພັນກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ**

ລັດຖະບານ ປະສານສົມທົບກັບ ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນການດຳເນີນການ ຕິດຕາມ ກວດສອບ ແລະ ກວດກາ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການເງິນ ແລະ ງົບປະມານແຫ່ງລັດ ພ້ອມທັງຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ.

ໃນກໍລະນີຈຳເປັນ ລັດຖະບານ ອາດເຊີນ ປະທານອົງການກວດສອບແຫ່ງລັດ ແລະ ປະທານອົງການກວດກາແຫ່ງລັດ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້.

**ມາດຕາ 32 (ປັບປຸງ) ການພົວພັນກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ**

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານ ມີປະສິດທິຜົນນັ້ນ ລັດຖະບານ ຕ້ອງປະສານສົມທົບກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ເພື່ອປຶກສາຫາລື, ແລກປ່ຽນຄຳເຫັນ, ປຸກລະດົມ, ຊຸກຍູ້ ໃຫ້ອົງການຈັດຕັ້ງດັ່ງກ່າວ ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ພ້ອມທັງສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ໄດ້ເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນ.

ໃນກໍລະນີຈຳເປັນ ອາດເຊີນຜູ້ຕາງໜ້າ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້.

**ມາດຕາ 33 ການພົວພັນກັບອົງການປົກຄອງທ້ອງຖິ່ນ**

ລັດຖະບານ ແມ່ນ ອົງການຈັດຕັ້ງຂັ້ນເທິງໂດຍກົງ ຂອງອົງການປົກຄອງທ້ອງຖິ່ນ ໂດຍມີການພົວພັນປະສານສົມທົບ ຊຶ່ງກັນ ແລະ ກັນ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ໃນການພິຈາລະນາຕັດສິນບັນຫາ ກ່ຽວກັບການສ້າງ ແລະ ຈັດຕັ້ງປະຕິບັດ ແຜນການ, ງົບປະມານແຫ່ງລັດ, ການຄຸ້ມຄອງພະນັກງານ-ລັດຖະກອນ, ການພົວພັນກັບຕ່າງປະເທດ ແລະ ວຽກງານອື່ນ ຢ່າງກົມກຽວ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 34 ການພົວພັນກັບຕ່າງປະເທດ**

ລັດຖະບານ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ລັດຖະບານ ສະໜັບສະໜູນການຕໍ່ສູ້ ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

**ມາດຕາ 35 ການພິຈາລະນາແກ້ໄຂຄຳສະເໜີ ຂອງປະຊາຊົນ**

ລັດຖະບານ ຮັບພິຈາລະນາ, ແກ້ໄຂຄຳສະເໜີ ຂອງປະຊາຊົນ ກ່ຽວກັບການກະທຳ ຫຼື ການຕົກລົງໃດໜຶ່ງ ຂອງການຈັດຕັ້ງບໍລິຫານລັດ ຫຼື ພະນັກງານ-ລັດຖະກອນ ທີ່ເຫັນວ່າເປັນການລະເມີດ ກົດໝາຍ, ລະບຽບການ ແລະ ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 37 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ